Laotian

The TB Skin Test (Mantoux)

# ການກວດຫາເຊື້ອໂຣກປອດເຫັ້ງ ໂດຍການທົດລອງ ສັກເຊື້ອຢາໃສ່ທີ່ຜີວໜັງ

*ການກວດຫາເຊື້ອ ໂຣກປອດເຫັ້ງ ໂດຍການທົດລອງສັກເຊື້ອຢາໃສ່ຜີວໜັງ ທີ່ເອີ້ນວ່າ* "Mantoux," *ແມ່ນການເຮັດທີ່ງ່າຍ ແລະບໍ່ອັນຕະຣາຍ ເພື່ອຈະໄດ້ຮູ້ວ່າ ຖ້າທ່ານມີເຊື້ອ ໂຣກປອດເຫັ້ງຫຼືບໍ່.*



## ເຊື້ອໂຣກປອດເຫັ້ງແລະການອັກເສບ ແມ່ນຫຍັງ?

*ໂຣກປອດເຫັ້ງມີສອງແບບດ້ວຍກັນ, ທັງສອງແບບນີ້ໃຊ້ຢາປິ່ນ ປົວໄດ້. ໃນເມື່ອເຊື້ອ ໂຣກເຂົ້າໄປໃນຮ່າງກາຍທຳອິດ, ມັນຈະທຳໃຫ້ ອັກເສັບ. ຖ້າບໍ່ມີການປິ່ນປົວ, ການອັກເສບນີ້ກໍ່ຈະຂຍາຍຕົວຂຶ້ນໄດ້. ທຸກຄົນສາມາດຕິດພຍາດປອດເຫັ້ງໄດ້ຈາກຜູ້ນຶ່ງໄປ ຫາອີກຜູ້ນຶ່ງ ໂດຍການແຜ່ ລະບາດຕາມໄປຕາມລົມ.*

| ຂັ້ນທຳອິດ **1** –<br>ການຕິດເຊື້ອໂຣກປອດເຫັ້ງ | ຂັ້ນທີ **2** –<br>ເລີ່ມກໍ່ຕົວເປັນພຍາດປອດເຫັ້ງ |
|---|---|
| *ເມື່ອເຊື້ອ ໂຣກປອດເຫັ້ງ ເຂົ້າມາໃນຮ່າງກາຍ"ບໍ່ທັນມີ ປະຕິກິຣິຍາໃດເທື່ອ" ໃນຂັ້ນນີ້ ມັນຈະຢູ່ດົນນານຫຼາຍປີ.* | *ພຍາດກໍ່ຕົວແຮງຂຶ້ນ, ແລະ ແຜ່ຂຫຍາຍ, ເລີ່ມທຳລາຍ ເນື້ອເຍື້ອຂອງຮ່າງກາຍ.* |
| *ທ່ານອາດຈະບໍ່ຮູ້ສຶກແລະບໍ່ເຫັນສິ່ງ ໃດຜິດປົກກະຕິ, ການສ່ອງໄຟຟ້າ ກໍເຫັນເປັນປົກກະຕິດີ.* | *ທ່ານຮູ້ສຶກເປັນໄຂ້, ທ່ານໝໍ ຈະເປັນຜູ້ກວດເບິ່ງວ່າ ຈຸດໃດ ທີ່ພຍາດປອດເຫັ້ງເປັນອັນ ຕະຣາຍ ຕໍ່ຮ່າງກາຍຂອງທ່ານ.* |
| *ພຍາດໃນຮ່າງກາຍຂອງທ່ານນີ້ ຍັງບໍ່ທັນຂຍາຍຕົວພໍທີ່ຈະແຜ່ລະບາດ ໄປສູ່ຜູ້ອື່ນໄດ້ເທື່ອ.* | *ຖ້າເຊື້ອ ໂຣກຢູ່ໃນປອດທ່ານ ມັນຈະແຜ່ຂຍາຍ ເຊື້ອ ໂຣກໃນ ຮ່າງກາຍທ່ານນີ້ ໄປໃສ່ຜູ້ອື່ນໄດ້ ໂດຍການໄອ, ຈາມ, ປາກເວົ້າ.* |
| *ຕາມປົກກະຕິສາມາດປິ່ນປົວໄດ້ຢາ ນຶ່ງຊຸໃຊ້ໄດ້ເຖິງ* 9 *ເດືອນ.* | *ປິ່ນປົວ ໂດຍການໃຊ້ຢາ* 3 *ຫຼື* 4 *ເທື່ອຢ່າງນ້ອຍ* 6 *ເດືອນ.* |

## ຂ້າພະເຈົ້າຈະຮູ້ໄດ້ຢ່າງໃດວ່າ ຂ້າພະເຈົ້າມີເຊື້ອໂຣກປອດເຫັ້ງ?

*ການທົດລອງສັກຢາໃສ່ທີ່ຜີວໜັງ* ("Mantoux") *ຈະບອກໃຫ້ຮູ້ວ່າທ່ານມີເຊື້ອ ໂຣກປອດເຫັ້ງຫຼືບໍ່. ທ່ານອາດຈະຕິດເຊື້ອ ໂຣກໄດ້ໃນເມື່ອທ່ານຢູ່ໃກ້ຊິດກັບຜູ້ທີ່ມີເຊື້ອ ໂຣກປອດເຫັ້ງໃນຮ່າງກາຍ* (*ເຖິງແມ່ນວ່າທ່ານ ຈະບໍ່ຮູ້ວ່າເຂົາປ່ວຍຫຼືບໍ່*).

*ທ່ານໝໍຈະສັກເຊື້ອຢາ ທີ່ເອີ້ນວ່າ* ("tuberculin") *ໃສ່ໃນແຂນຂ້າງໃນຜີວໜັງຂອງທ່ານ* .



**ທ່ານຕ້ອງກັບມາຫາທ່ານໝໍອີກພາຍ ໃນ 2-3 ວັນ ເພື່ອໃຫ້ທ່ານໝໍເບິ່ງແຂນ ບ່ອນທີ່ເພິ່ນ ສັກຢາທົດລອງໄວ້ນັ້ນ ວ່າມັນເປັນຢ່າງໃດ.**

*ຖ້າທ່ານເກີດມີປະຕິກິຣິຍາຕໍ່ການທົດລອງ, ມັນຈະໃຄ່ພອງເປັນວົງຂຶ້ນ, ທ່ານໝໍຂອງທ່ານຈະວັດແທກບໍຣິເວນທີ່ໃຂ່ພອງນັ້ນ. ຖ້າຫາກມັນໃຄ່ເປັນວົງນັ້ນ, ມັນຈະເຊົາໄປເອງໃນສອງສາມອາທິດ.*

## ຂ້າພະເຈົ້າຈະຮັກສາແຂນຢ່າງໃດ ຫຼັງຈາກການທົດລອງສັກຢາທີ່ຜີວໜັງ?

- *ຫ້າມໃຊ້ຜ້າພັນແຜ ຫຼື ເທັບ, ພັນຄຽນບໍຣິເວນນັ້ນ.*
- *ລະມັດລະວັງຢ່າເກົາ, ຫຼື ຮຸກຖູມັນ.*
- *ຖ້າທ່ານຮູ້ສຶກຄັນທີ່ບໍຣິເວນນັ້ນ, ໃຊ້ຜ້າເຢັນແປະໄວ້*
- *ທ່ານສາມາດລ້າງແຂນແລະຄ່ອຍໆເຊັດໃຫ້ມັນແຫ້ງ.*

Adapted from material from the Minnesota Department of Health, TB Prevention and Control Program

**ຢ່າຢ້ານທີ່ຈະໄປກວດ, ພຍາດນີ້ສາມາດປິ່ນປົວໄດ້!**

## ຈະເຮັດຫຍັງແດ່ຖ້າຜົນການທົດລອງອອກມາເປັນລົບ?

*ຜົນກວດເປັນ "ລົບ" ຖ້າຫາກມັນບໍ່ໃຂ່ເປັນຕຸ່ມ (ຫຼື ພຽງແຕ່ເປັນຕຸ່ມນ້ອຍ) ບໍ່ທີ່ສັກຢາທົດລອງນັ້ນ. ຖ້າຫາກເປັນເຊັ່ນນີ້ກໍໝາຍຄວາມວ່າ ທ່ານບໍ່ເຊື້ອພຍາດປອດເຫ້ຼງ.*

*ໃນບາງກໍຣະນີ, ທ່ານອາດຈະຕ້ອງໄດ້ກວດທົດລອງອີກຄືນໃໝ່ ໃນຕໍ່ໜ້າໄປພາຍໜ້າ.*

## ຈະເຮັດຫຍັງແດ່ຖ້າຜົນການທົດລອງອອກມາເປັນບວກ?

*ຜົນການກວດເປັນ"ບວກ" ຖ້າຫາກມີຕຸ່ມໃຂ່ເປັນກ້ອນສໍາໃດສໍານຶ່ງ ຢູ່ທີ່ບໍຣິເວນສັກຢາທົດລອງນັ້ນ. ນີ້ໝາຍຄວາມວ່າທ່ານອາດຈະມີເຊື້ອໂຣກຢູ່ໃນຮ່າງກາຍຂອງທ່ານ. ຄົນສ່ວນຫຼາຍທີ່ມີຜົນກວດອອກມາເປັນບວກ. ໃຫ້ແນ່ໃຈວ່າທ່ານໝໍຕ້ອງໄດ້ກວດແລະສ່ອງໄຟຟ້າທີ່ໜ້າເອິກທ່ານ. ທ່ານອາດຈະໄດ້ກວດອີກເພື່ອຈະໄດ້ຮູ້ວ່າທ່ານມີເຊື້ອໂຣກປອດເຫ້ຼງທີ່ຈະແຜ່ລະບາດໃສ່ຜູ້ອື່ນໄດ້ຫຼືບໍ່.*

> ປ້ອງກັນສຸຂພາບຂອງທ່ານແລະສຸຂພາບຂອງຄົນໃນຄອບຄົວຂອງ ທ່ານ. ຕ້ອງກວດເບິ່ງໂຣກປອດເຫ້ຼງ. ການໄປກວດເບິ່ງໂຣກ ປອດເຫ້ຼງ,
> ໃຫ້ຕິດຕໍ່ຫາທ່ານໝໍຂອງທ່ານຫຼື ຜະແນກ
> ສາທາຣະນະສຸກໃນເມືອງຂອງທ່ານ.

## ທ່ານຄວນກວດເບິ່ງໂຣກປອດເຫ້ຼງ ຖ້າວ່າ:

- *ທ່ານຢູ່ໃກ້ຊິດກັບຜູ້ທີ່ມີເຊື້ອໂຣກປອດເຫ້ຼງ,*
- *ທ່ານຢູ່ໃນປະເທດທີ່ມີຄົນສ່ວນຫຼາຍທີ່ມີເຊື້ອໂຣກ ປອດເຫ້ຼງ,*
- *ທ່ານທໍາງານຫຼືຢູ່ໃນສຖານທີ່ເບີຊິງໂຮມ, ຄລີນິກ, ໂຮງໝໍ, ຄຸກ, ສຖານທີ່ບ່ອນພັກເຊົາໃຫ້ຄົນພະເນຈອນ ຫຼື*
- *ທ່ານຕິດເຊື້ອ ເອັຍໄອວີ ຫຼືມີບັນຫາສຸຂພາບບາງຢ່າງ.*

## ຈະເປັນແນວໃດຖ້າຂ້າພະເຈົ້າສັກຢາວັກຊີນ **BCG?**

*ເຖິງແມ່ນວ່າທ່ານສັກຢາວັກຊີນ* BCG, *ທ່ານສາມາດທີ່ຈະກວດທົດລອງ ໂດຍການສັກຢາທີ່ຜິວໜັງເພື່ອຊອກເບິ່ງໂຣກນີ້ໄດ້.*

- *ບຸກຄົນທີ່ສັກຢາວັກຊີນ* BCG *ຍັງສາມາດທີ່ຈະຕິດເຊື້ອໂຣກປອດເຫ້ຼງ ແລະສາມາດແຜ່ລະບາດເຊື້ອໂຣກນີ້ໄດ້.*
- *ຢາວັກຊີນ* BCG *ຊ່ວຍປ້ອງກັນເດັກນ້ອຍຈາກການເປັນໄຂ້ຍ້ອນເຊື້ອໂຣກນີ້ໄດ້. ການປ້ອງກັນຊ່ວຍ ໄດ້ເມື່ອເຂົາໃຫ່ຍຂຶ້ນ.*
- *ຢາວັນຊີນ* BCG *ບາງຄັ້ງຈະທໍາໃຫ້ຜູ້ທີ່ມີຜົນກວດເປັນ ບວກນັ້ນເກີດປະຕິກິຣິຍາ. ຖ້າວ່າທ່ານມີຜົນກວດອອກມາເປັນບວກທີ່ມີປະຕິກິຣິຍາຕໍ່ການກວດນັ້ນ, ທ່ານອາດຈະມີເຊື້ອໂຣກປອດເຫ້ຼງຢູ່ໃນຮ່າງກາຍ, ອາດຈະບໍ່ແມ່ນເກີດຈາກການສັກຢາວັນຊີນ* BCG *ນີ້.*

> ທ່ານສາມາດກວດໂດຍການສັກຢາທົດລອງທີ່ຜິວໜັງ,
> ເຖິງແມ່ນວ່າ ທ່ານຈະໄດ້ສັກຢາວັນຊີນ **BCG** ແລ້ວກໍຕາມ.

Oregon Health Authority



Adapted from material from the Minnesota Department of Health, TB Prevention and Control Program